ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

28-30 ພະຈິກ 2022
ປີທີ 11
ສະບັບທີ 895

## ປະທານສະພາແຫ່ງຊາດລາວ ຕ້ອນຮັບການເຂົ້າຢ້ຽມຄຳນັບຂອງຮອງປະທານສະພາແຫ່ງຊາດ ສ.ເກົາຫລີ



(ສພຊ) ວັນທີ 28 ພະຈິກ 2022 ທີ່ສະພາແຫ່ງຊາດ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຄຳນັບຂອງ ທ່ານ ຈອງ ວູ ເທັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ພ້ອມດ້ວຍຄະນະ ໃນໂອ

ອ່ານຕໍ່ໜ້າ 2






## ແຈ້ງການ

### ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59 ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ ແລະ ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 263/ຄປຈ, ລົງວັນທີ 28 ຕຸລາ 2022.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງ ອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 5–30 ທັນວາ 2022 ຢູ່ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

## ຮອງປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຄຳນັບຂອງປະທານອົງການກວດສອບແຫ່ງລັດ ສສ.ຫວຽດນາມ



(ສພຊ) ໃນວັນທີ 25 ພະຈິກ 2022, ທີ່ສະພາແຫ່ງຊາດ, ສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຄຳນັບຂອງສະຫາຍ ໂງ ວັນ ຕວັນ ກຳມະການສູນກາງພັກກອມມູນິດຫວຽດນາມ, ປະທານອົງການກວດສອບແຫ່ງລັດ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ.

ອ່ານຕໍ່ໜ້າ 3

## ເສີມຂະຫຍາຍມູນເຊື້ອວັນຊາດ 2 ທັນວາ ເຂົ້າໃນພາລະກິດສ້າງສາພັດທະນາປະເທດຊາດ

ຊາດລາວແມ່ນຊາດໜຶ່ງ ທີ່ມີປະຫວັດສາດອັນຍາວນານຫລາຍພັນປີ, ມີມູນເຊື້ອທີ່ສະຫງ່າອົງອາດແຫ່ງການຕໍ່ສູ້ຕ້ານການຮຸກຮານ ຂອງສັດຕູ ຈາກພາຍນອກ ແລະ ສ້າງສາພັດທະນາ.

ໂດຍສືບທອດມູນເຊື້ອອັນອົງອາດຂອງບັນພະບູລຸດ ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ ໄດ້ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍປະເທດຊາດ ຢ່າງມີໄຊ, ສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975 ເຊິ່ງປີນີ້ ໄດ້ບັນຈົບຄົບຮອບ 47 ປີ.

47 ປີ ແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາລະບອບໃໝ່ ພາຍໃຕ້ການນຳພາຂອງພັກແມ່ນໄລຍະເວລາທີ່ປະເທດຊາດຂອງພວກເຮົາ ມີການຂະຫຍາຍຕົວຢ່າງຮອບດ້ານ ທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດ ໂດຍສະເພາະແມ່ນພາຍຫລັງຈາກທີ່ພັກ ໄດ້ວາງແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫລັກການມານີ້ ນັບແຕ່ປີ 1986 ເປັນຕົ້ນມາ, ການພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ ໄດ້ມີຜົນສຳເລັດ

ອ່ານຕໍ່ໜ້າ 3

## ຮອງປະທານ ສພຊ ພົບປະໂອ້ລົມ ຢູ່ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ





(ສພຊ) ເພື່ອເປັນການເຜີຍແຜ່ບັນດາເອກະສານສຳຄັນ ເປັນຕົ້ນແມ່ນທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ບັນດາກົມທີ່ຂຶ້ນກັບກຳມາທິການດັ່ງກ່າວ. ໃນວັນທີ 18 ພະຈິກ 2022 ທີ່ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ (ເວີນຄຳ) ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນຜູ້ຊີ້ນຳວຽກງານກຳມາທິການປ້ອງກັນຊາດ-

ອ່ານຕໍ່ໜ້າ 2

## ຖະແຫລ່ງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX

(ສພຊ) ໃນວັນທີ 28 ພະຈິກ 2022 ທີ່ສະພາແຫ່ງຊາດ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການຄະນະປະຈຳ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫລ່ງຂ່າວຕໍ່ສື່ມວນຊົນທຸກຂະແໜງການກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ປະຕິບັດຕາມມາດຕາ 59 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນ

ອ່ານຕໍ່ໜ້າ 7




ໜ້າ 4


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຄຳນັບຮັບຕ້ອນ ວັນຊາດ 2 ທັນວາ (02/12/1975-02/12/2022) ຄົບຮອບ 47 ປີ ຢ່າງສຸດໃຈ!

## ປະທານ...

ກາດທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ໃນໂອກາດດັ່ງກ່າວ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຕ້ອນຮັບອັນອົບອຸ່ນຕໍ່ ທ່ານ ຈອງ ວູ ເທັກ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເຊິ່ງເປັນການນຳເອົາໄມຕີຈິດມິດຕະພາບ ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນ ສ.ເກົາຫລີ ມາສູ່ສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນລາວ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມລະຫວ່າງ ສອງປະເທດ ກໍຄື ສອງອົງການນິຕິບັນຍັດ ສປປລາວ ແລະ ສ.ເກົາຫລີ ໃຫ້ເກີດດອກອອກຜົນຍິ່ງຂຶ້ນ; ຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ຍັງໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນໄປຍັງທ່ານ ປາກ ບຽວ ຊຶງ ປະທານສະພາແຫ່ງຊາດແຫ່ງ ສ.ເກົາຫລີ ແລະ ຫວັງວ່າຈະໄດ້ຕ້ອນຮັບການມາຢ້ຽມຢາມ ສປປລາວຢ່າງເປັນທາງການ ໃນເວລາອັນໃກ້ນີ້.

ຈາກນັ້ນ, ໄດ້ມີການພົບປະສອງຝ່າຍລະຫວ່າງ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ກັບທ່ານ ຈອງ ວູ ເທັກ (Chung Woo-tiak) ຮອງປະທານສະພາແຫ່ງຊາດແຫ່ງ ສ.ເກົາຫລີ ໃນການພົບປະດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວສະແດງຄວາມປິຕິຍິນດີທີ່ໄດ້ຕ້ອນຮັບທ່ານ ຈອງ ວູ ເທັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ພ້ອມດ້ວຍຄະນະ ໃນໂອກາດທີ່ມາເຄື່ອນໄຫວຢ້ຽມຢາມ ສປປລາວ ໃນຄັ້ງນີ້. ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຊົມເຊີຍຄູ່ຮ່ວມຕຳແໜ່ງທີ່ໄດ້ຮັບການແຕ່ງຕັ້ງເປັນຮອງປະທານສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ແລະ ສະແດງຄວາມຂອບໃຈທີ່ທ່ານໄດ້ເລືອກເອົາ ສປປລາວ ເປັນປະເທດທຳອິດຂອງການຢ້ຽມຢາມຕ່າງປະເທດຂອງທ່ານເຊິ່ງເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງສອງປະເທດ ສປປລາວ ແລະ ສ.ເກົາຫລີ ກໍຄື ສອງອົງການນິຕິບັດຍັດຂອງສອງປະເທດ, ທັງເປັນການຈັດຕັ້ງຜັນຂະຫຍາຍຜົນການພົບປະທາງໄກ ລະຫວ່າງ ສອງປະທານສະພາແຫ່ງຊາດ ລາວ ແລະ ສ.ເກົາຫລີ ໃນທ້າຍເດືອນມີນາ ປີ 2022 ທີ່ຜ່ານມາ; ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ລະຫວ່າງ ສອງປະເທດລາວ-ສ.ເກົາຫລີ ກໍຄືການພົວພັນຮ່ວມມືລະຫວ່າງ ສອງອົງການນິຕິບັດຍັດຂອງພວກເຮົາ ໃນໄລຍະຜ່ານມາ; ສະແດງຄວາມຊົມເຊີຍຢ່າງຈິງໃຈ ແລະ ຕີລາຄາສູງ ຕໍ່ຜົນສຳເລັດຮອບດ້ານຂອງ ສ.ເກົາຫລີ ຕະຫລອດໄລຍະທີ່ຜ່ານມາ ແລະ ຜົນສຳເລັດໃນການເປັນເຈົ້າພາບຈັດກອງປະຊຸມເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ຄັ້ງທີ 29 ຜ່ານມາ ແລະ ການເຄື່ອນໄຫວອື່ນໆ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ; ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ ສ.ເກົາຫລີ ທີ່ໄດ້ໃຫ້ການຊ່ວຍເຫລືອ ສປປລາວ ເພື່ອສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດ COVID-19.

ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ຕີລາຄາສູງຕໍ່ການພົວພັນລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ເຊິ່ງສະແດງອອກໃນການແລກປ່ຽນຢ້ຽມຢາມເຊິ່ງກັນ ແລະ ກັນ ໃນລະດັບປະທານສະພາແຫ່ງຊາດ, ລະດັບປະທານກຳມາທິການ ແລະ ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫລີ; ພິເສດໃນທ້າຍເດືອນມີນາ 2022 ນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ ແຫ່ງລາວ ແລະ ພະນະທ່ານ ປາກ ບຽວ ຊຶງ ປະທານສະພາແຫ່ງຊາດ ສ.ເກົາຫລີ ກໍໄດ້ພົບປະຜ່ານວິດີໂອທາງໄກນຳກັນ, ບັນດາອົງການທີ່ຂຶ້ນກັບສະພາແຫ່ງຊາດຂອງ 2 ປະເທດຍັງໄດ້ເຊັນບົດບັນທຶກຂໍ້ຕົກລົງໃນໄລຍະຊຸມປີຜ່ານມາ, ມີການຮ່ວມມືກັນຢູ່ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ IPU, ASEP, APPF, AIPA ແລະ ເວທີອື່ນໆ ເພື່ອປະກອບສ່ວນໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ.

ທ່ານຮອງປະທານສະພາແຫ່ງຊາດ ສ.ເກົາຫລີ ໄດ້ສະແດງຄວາມດີໃຈທີ່ໄດ້ມີໂອກາດມາຢ້ຽມຢາມ ສປປລາວ ເປັນປະເທດທຳອິດພາຍຫລັງຖືກແຕ່ງຕັ້ງເປັນຮອງປະທານສະພາແຫ່ງຊາດ; ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຈາກຄູ່ຕຳແໜ່ງຂອງຝ່າຍລາວ; ໄດ້ຕີລາຄາສູງຜົນການຮ່ວມມືໃນຂົງເຂດຕ່າງໆລະຫວ່າງ 2 ປະເທດ ກໍຄືລະຫວ່າງອົງການນິຕິບັນຍັດຂອງ 2 ປະເທດ.

ສອງຝ່າຍໄດ້ເປັນເອກະພາບກັບທິດທາງຮ່ວມມືໃນຕໍ່ໜ້າຄື: ສືບຕໍ່ແລກປ່ຽນການຢ້ຽມຢາມ ລະຫວ່າງຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ, ຄະນະມິດຕະພາບລັດຖະສະພາ ແລະ ຄະນະເລຂາທິການ ຂອງສອງອົງການນິຕິບັນຍັດນຳກັນ ຢ່າງເປັນປົກກະຕິ; ສືບຕໍ່ແລກປ່ຽນຂໍ້ມູນຂ່າວສານທີ່ມີຄວາມສົນໃຈນຳກັນ ກ່ຽວກັບການປະຕິບັດພາລະບົດບາດດ້ານນິຕິບັນຍັດ; ສອງຝ່າຍ ຈະສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງທີ່ສອງລັດຖະບານ ໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ເປັນຕົ້ນແມ່ນສັນຍາການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ, ດ້ານພະລັງງານ, ການເຝິກສີມືແຮງງານ ແລະ ອື່ນໆ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນໃນພາລະກິດປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ ໃນພາກພື້ນ ແລະ ສາກົນ.

ນອກຈາກການເຂົ້າຢ້ຽມຂ່ຳນັບປະທານສະພາແຫ່ງຊາດລາວ, ພົບປະສອງຝ່າຍກັບຮອງປະທານສະພາແຫ່ງຊາດລາວແລ້ວ, ທ່ານຮອງປະທານສະພາແຫ່ງຊາດ ສ.ເກົາຫລີ ຍັງໄດ້ພົບປະກັບລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ປະທານຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫລີ, ຢ້ຽມຢາມໂຄງການລົງທຶນ ແລະ ຊ່ວຍເຫລືອຂອງລັດຖະບານ ສ.ເກົາຫລີ ເຊັ່ນ: ໂຮງງານກັນຕະຝັ່ງເຈື່ອນ, ໂຮງໝໍແມ່ ແລະ ເດັກ ແລະ ສູນພັດທະນາສີມືແຮງງານ ແລະ ພື້ນຖານວັດທະນະທຳຈຳນວນໜຶ່ງ ຢູ່ນະຄອນຫລວງວຽງຈັນ.

(ສອນສັກ ວັນວິໄຊ)




## ຮອງປະທານ...

ປ້ອງກັນຄວາມສະຫງົບສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະຢ້ຽມຢາມເຮັດວຽກຮ່ວມກັບບັນດາຄະນະພັກ, ຄະນະອຳນວຍການ, ບັນດາພະນັກງານຄູອາຈານ ແລະ ນັກສຶກສາພາຍໃນວິທະຍາຄານ ໂດຍການຕ້ອນຮັບຂອງທ່ານ ພົຈວ. ປອ. ວັນສົມ ສີສົມບັດ ຫົວໜ້າອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ພ້ອມດ້ວຍຄະນະ.

ກອງປະຊຸມ ໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວຂອງວິທະຍາຄານໂດຍຫຍໍ້ຈາກທ່ານຫົວໜ້າອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ; ການເຜີຍແຜ່ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ສະພາແຫ່ງຊາດ ຊຸດທີ IX; ເຜີຍແຜ່ເອກະສານກ່ຽວກັບສະພາບຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບ ໃນກຳລັງປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມຊີ້ນຳຕໍ່ກອງປະຊຸມໂດຍທ່ານໄດ້ຍົກໃຫ້ເຫັນກ່ຽວກັບສະພາບການຫຍຸ້ງຍາກສັບສົນຂອງໂລກ ແລະ ພາກພື້ນໃຫ້ມີສະຕິຈຳແນກແຍກມິດສັດຕູແລ້ວຍັງໄດ້ເນັ້ນໜັກໃຫ້ບັນດາຄະນະພັກ, ຄະນະອຳນວຍການ, ບັນດາພະນັກງານຄູອາຈານ ໃຫ້ສືບຕໍ່ນຳເອົາເນື້ອໃນ, ຈິດໃຈບັນດາເອກະສານດັ່ງກ່າວເຜີຍແຜ່ໃຫ້ແກ່ນາຍ ແລະ ພົນຕຳຫລວດ ທົ່ວວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ພ້ອມເອົາເຂົ້າເນື້ອໃນການສອນ-ການຮຽນ ໃຫ້ບັນດານັກສຶກສາໄດ້ສຶກສາຄົ້ນຄວ້າຮ່ຳຮຽນກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II; ຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບໃນກຳລັງປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

(ສອນສັກ ວັນວິໄຊ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

*❑ ປີ 1993 ສປປລາວ ສາມາດສຳເລັດການຂຶ້ນບັນຊີມໍລະດົກລະດັບຊາດ 15 ແຫ່ງ ແລະ ມາຮອດປັດຈຸບັນ ສາມາດສຳເລັດການນຳສະເໜີເອົາມໍລະດົກແຫ່ງຊາດທາງດ້ານວັດທະນະທຳທີ່ເປັນວັດຖຸເຂົ້າເປັນມໍລະດົກໂລກ 3 ແຫ່ງ ຄື: ເມືອງຫລວງພະບາງ (1995) ວັດພູຈຳປາສັກ (2001) ແລະ ທົ່ງໄຫຫີນຊຽງຂວາງ (2019); ພ້ອມນັ້ນ, ຍັງໄດ້ສຳເລັດການນຳສະເໜີເອົາສຽງແຄນເຊື້ອຊາດລາວ ເຂົ້າເປັນມໍລະດົກທາງດ້ານນາມມະທຳຂອງມວນມະນຸດຊາດ ປີ 2017 ປັດຈຸບັນ, ກຳລັງປະກອບເອກະສານຄຳຮ້ອງ ເພື່ອນຳສະເໜີເອົາພູມປັນຍາການຕ່ຳລາຍນາກ ລຳວົງລາວ ເຂົ້າເປັນມໍລະດົກໂລກທາງດ້ານນາມມະທຳ ແລະ ກຳລັງຊຸ້ນຊ້ຽວປະກອບເອກະສານຄຳຮ້ອງ ເພື່ອສະເໜີເອົາອຸດທິຍານແຫ່ງຊາດຫີນໜາມໜໍ່ ເມືອງບົວລະພາ ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກຮ່ວມຊາຍແດນແບບເຊື່ອມຕໍ່ກັບສວນອຸດທິຍານແຫ່ງຊາດ ຟອງຫຍາແກ່ບາງ ມໍລະດົກໂລກຂອງຫວຽດນາມ ຄາດວ່າຈະສຳເລັດ ແລະ ຍື່ນສະເໜີຕໍ່ອົງການອຸຍເນັດສະໂກ ເພື່ອພິຈາລະນາໃນຕົ້ນເດືອນກຸມພາ 2023.*

***ນສພ. ວຽງຈັນໃໝ່ 29/11/2022***

*❑ ປັດຈຸບັນ, ເຊື້ອພະຍາດໂຄວິດ-19 ຍັງສືບຕໍ່ແຜ່ລະບາດໃນທົ່ວໂລກ, ນັບແຕ່ຕົ້ນປີນີ້ເປັນຕົ້ນມາ, ຜູ້ເສຍຊີວິດຈາກເຊື້ອພະຍາດໂຄວິດ-19 ໃນທົ່ວໂລກມີຫລາຍກວ່າລ້ານຄົນແລ້ວ ແລະ ເຊື້ອພະຍາດຍັງສືບຕໍ່ກາຍພັນຢ່າງບໍ່ຢຸດຢັ້ງ. ກ່ອນໜ້ານີ້ບໍ່ດົນ, ວິທະຍຸໂທລະພາບສູນກາງຈີນ (CGTN) ໄດ້ເຮັດການຢັ່ງປະຊາມະຕິຕໍ່ຊາວເນັດທົ່ວໂລກ ເຊິ່ງຜົນການຢັ່ງປະຊາມະຕິດັ່ງກ່າວສະແດງໃຫ້ເຫັນວ່າ: ມີ 85,4% ຂອງຜູ້ຕອບສຳພາດເຫັນວ່າຄວນປະຕິບັດມາດຕະການໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ເພື່ອຫລີກລ່ຽງບໍ່ໃຫ້ມີການຕິດເຊື້ອພະຍາດໂຄວິດ-19 ຫລາຍກວ່າເກົ່າ.*

***ນສພ. ປະຊາຊົນ 29/11/2022***

*❑ ໂຄງການກໍ່ສ້າງເຂດໂລຊິດສະຕິກພາກ ມີເນື້ອທີ່ທັງໝົດ 327 ເຮັກຕາ ນັບຈາກສະຖານີໄຟຟ້າດົງໂພສີ ລຽບຕາມເສັ້ນທາງດົງໂພສີ-ຊຽງດາ ຈົນເຖິງທາງຕັດໃໝ່ນາຄວາຍໃຕ້ ແບ່ງອອກເປັນ 7 ເຂດກິດຈະກຳຫລັກ ຄື: ເຂດກັກກັນພືດ ກັກກັນສັດ ເນື້ອທີ່ 10 ເຮັກຕາ ເຂດສາງນ້ຳມັນ ເນື້ອທີ່ 6 ເຮັກຕາ ເຂດຜະລິດ ແລະ ປຸງແຕ່ງສິນຄ້າ ເພື່ອສົ່ງອອກ ເນື້ອທີ່ 146 ເຮັກຕາ ເຂດໂລຊິດສະຕິກພາກ ເນື້ອທີ່ 44 ເຮັກຕາ ເຂດພື້ນທີ່ການຄ້າເສລີ 45 ເຮັກຕາ ເຂດເຕັກໂນໂລຊີ ແລະ ເຂດຮາລານຮັບ ເນື້ອທີ່ 49 ເຮັກຕາ ແລະ ເຂດພື້ນທີ່ບໍລິຫານ ແລະ ຫ້ອງການ ເນື້ອທີ່ 27 ເຮັກຕາ ເຊິ່ງໂລຊິດສະຕິກຄົບວົງຈອນນີ້ແມ່ນຄາດວ່າຈະໄດ້ລົງທຶນ 547 ລ້ານໂດລາ ທັງໝົດນີ້ແມ່ນການລົງທຶນຂອງເອກະຊົນລາວ 100% ແລະ ຄາດຄະເນຈະສຳເລັດການກໍ່ສ້າງ ແລະ ເປີດໃຫ້ບໍລິການຢ່າງເຕັມຮູບແບບໃນອີກ 2-3 ປີຂ້າງໜ້າ ເຊິ່ງການກໍ່ສ້າງໄລຍະທີ 1 ວຽກງານການບຸກເບີກ ແລະ ກໍ່ສ້າງພື້ນຖານໂຄງຄາດວ່າຈະສຳເລັດ ໃນໄຕມາດທີ 3 ປີ 2023.*

***ນສພ. ວຽງຈັນໃໝ່ 29/11/2022***

**ເສີມຂະຫຍາຍ...**

ອັນສຳຄັນ ແລະ ມີບາດກ້າວຂະຫຍາຍຕົວຕໍ່ເນື່ອງ, ໝັ້ນທ່ຽງ, ອັດຕາການເຕີບໂຕຂອງເສດຖະກິດສະເລ່ຍເພີ່ມຂຶ້ນໃນແຕ່ລະປີເຊັ່ນ: ປີ 1990 ສະເລ່ຍບັນລຸ 4,8% ຕໍ່ປີ, ປີ 1995 ສະເລ່ຍບັນລຸ 6,4% ຕໍ່ປີ, ປີ 2005 ບັນລຸ 6,2%, ປີ 2010 ສະເລ່ຍ 7,9%, ປີ 2015 ສະເລ່ຍ 7,8%. ຄາດຄະເນໝົດປີ 2020 ຂະຫຍາຍຕົວຢູ່ໃນລະດັບ 3,3%-3,6%, ປີ 2021 ຂະຫຍາຍຕົວຢູ່ໃນລະດັບ 3,0% ຍ້ອນການລະບາດໂຄວິດ-19 ແກ່ຍາວ. ປີ 2022 ຄາດຄະເນຈະຂະຫຍາຍຕົວຢູ່ໃນລະດັບ 4,5%. ພ້ອມກັນນັ້ນ, ລາຍຮັບສະເລ່ຍໃສ່ຫົວຄົນກໍເພີ່ມຂຶ້ນເຊັ່ນ: ປີ 1985 ບັນລຸ 114 ໂດລາ, ປີ 1995 ເພີ່ມຂຶ້ນເປັນ 380 ໂດລາ, ປີ 2006 ເພີ່ມຂຶ້ນເປັນ 534 ໂດລາ, ປີ 2015 ເພີ່ມຂຶ້ນ 1.970 ໂດລາ, ປີ 2020 ເພີ່ມຂຶ້ນ 2.742 ໂດລາ, ປີ 2021 ເພີ່ມຂຶ້ນເປັນ 2.649 ໂດລາ ແລະ ປີ 2022 ຫລຸດລົງເຫລືອພຽງ 1.841 ໂດລາຕໍ່ຄົນຕໍ່ປີ ອັນໄດ້ເຮັດໃຫ້ໂສມໜ້າໃໝ່ຂອງປະເທດເຮົາມີການປ່ຽນແປງຢ່າງໃຫຍ່ຫລວງ.

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ຕີລາຄາວ່າ: ຜົນສຳເລັດອັນສຳຄັນ ແລະ ເປັນພື້ນຖານກວ່າໝູ່ແມ່ນຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ ໄດ້ຮັບການປົກປັກຮັກສາໄວ້ໄດ້ຢ່າງໝັ້ນຄົງ, ລະບອບປະຊາທິປະໄຕ ປະຊາຊົນ ມີສະຖຽນລະພາບອັນໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ສ້າງສະພາບແວດລ້ອມທີ່ສະຫງົບສຸກ, ເງື່ອນໄຂເອື້ອອຳນວຍໃຫ້ແກ່ການທຳມາຫາກິນຂອງປະຊາຊົນລາວບັນດາເຜົ່າ, ສ້າງຄວາມເຊື່ອໝັ້ນໃຫ້ນັກລົງທຶນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ, ຮັບປະກັນໃຫ້ການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ກໍຄືການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໄດ້ຢ່າງເປັນເຈົ້າການ. ຜົນສຳເລັດອັນພົ້ນເດັ່ນທີ່ເປັນໜ້າພາກພູມໃຈແມ່ນເສດຖະກິດແຫ່ງຊາດ ໄດ້ຂະຫຍາຍຕົວດ້ວຍຈັງຫວະໄວ, ຕໍ່ເນື່ອງ ແລະ ດຳເນີນໄປຢ່າງຖືກທິດ; ບັນຫາສຳຄັນແມ່ນພວກເຮົາສາມາດບຸກທະລຸໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຮັດໃຫ້ລາຍໄດ້ຕົວຈິງຂອງປະຊາຊົນເພີ່ມຂຶ້ນ; ໂຄງປະກອບເສດຖະກິດໄດ້ຫັນປ່ຽນຢ່າງຕັ້ງໜ້າ ໄປຕາມທິດພັດທະນາການຜະລິດກະສິກຳເປັນສິນຄ້າ ຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການ; ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງທີ່ປະເທດເຮົາມີທ່າແຮງໄດ້ປຽບ ເປັນຕົ້ນການພັດທະນາພະລັງງານໄຟຟ້າ ໄດ້ມີການຂະຫຍາຍຕົວຢ່າງກະໂດດຂັ້ນ ເຊິ່ງປັດຈຸບັນ ສປປລາວ ມີແຫລ່ງຜະລິດໄຟຟ້າ 86 ແຫ່ງ, ມີກຳລັງຕິດຕັ້ງທັງໝົດ 10.447,93 ເມກາວັດ, ສາມາດຜະລິດພະລັງງານໄຟຟ້າໄດ້ເຖິງ 54.050,93 ລ້ານກິໂລວັດໂມງຕໍ່ປີ. ທົ່ວປະເທດມີລະບົບສາຍສົ່ງແຮງສູງ, ແຮງກາງ, ແຮງຕ່ຳ ແລະ ມີສະຖານີຈ່າຍໄຟຟ້າ 84 ແຫ່ງ ສາມາດສະໜອງໄຟຟ້າໄດ້ 100% ໃນເທດສະບານແຂວງ, ນະຄອນຫລວງ, ເທດສະບານເມືອງ ແລະ ນະຄອນ. 93% ຂອງຈຳນວນບ້ານ ແລະ 95% ຂອງຈຳນວນຄອບຄົວໃນທົ່ວປະເທດ ໄດ້ໃຊ້ໄຟຟ້າແບບຖາວອນ. ນອກນີ້, ສປປລາວ ຍັງຈຳໜ່າຍໃຫ້ຕ່າງປະເທດໄດ້ 6.423 ລ້ານເມກາວັດໂມງ. ໃນນີ້, ສົ່ງໄປປະເທດໄທ 5.421 ເມກາວັດ, ຫວຽດນາມ 572 ເມກາວັດ, ກຳປູເຈຍ 320 ເມກາວັດ, ມຽນມາ 10 ເມກາວັດ ແລະ ຍັງເຊື່ອມໂຍງ ແລະ ຈຳໜ່າຍໄປມາເລເຊຍ 100 ເມກາວັດ.

ການພັດທະນາພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ໄດ້ມີບາດກ້າວບຸກທະລຸຢ່າງບໍ່ເຄີຍມີມາກ່ອນ ບໍ່ວ່າຢູ່ໃນຕົວເມືອງ ກໍຄືຊົນນະບົດ. ຂົງເຂດວັດທະນະທຳ-ສັງຄົມ ໄດ້ຮັບການຂະຫຍາຍຕົວ ທັງໃນດ້ານປະລິມານ ແລະ ຄຸນນະພາບ. ອັນພົ້ນເດັ່ນ ແມ່ນໄດ້ມີຜົນສຳເລັດເປັນສ່ວນໃຫຍ່ ແລະ ມີການຫັນປ່ຽນຢ່າງຈະແຈ້ງ ໃນການປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs). ລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ໄດ້ຮັບການບູລະນະໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ. ພັກເຮົາ ໄດ້ເປັນເຈົ້າການຊີ້ນຳການເຄື່ອນໄຫວວຽກງານຕ່າງປະເທດຢ່າງຕັ້ງໜ້າ. ອັນໄດ້ປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືການເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ພາກພື້ນ ແລະ ໃນໂລກ. ຖານະບົດບາດ ແລະ ອິດທິພົນຂອງ ສປປລາວ ໄດ້ຮັບການເຊີດຊູສູງເດັ່ນຂຶ້ນກວ່າເກົ່າ ໃນເວທີພາກພື້ນ ແລະ ສາກົນ. ປັດຈຸບັນ ສປປລາວ ໄດ້ມີການພົວພັນການທູດກັບ 148 ປະເທດ (ຈາກ 193 ປະເທດທົ່ວໂລກ) ແລະ ມີການພົວພັນດ້ານພັກ 140 ພັກການເມືອງໃນໂລກ. ມີສຳນັກງານຜູ້ຕາງໜ້າການທູດຂອງ ສປປລາວ ຢູ່ຕ່າງປະເທດ 41 ແຫ່ງ. ໃນນັ້ນ, ມີສະຖານເອກອັກຄະລັດຖະທູດ 27 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ, ສະຖານກົງສຸນໃຫຍ່ 10 ແຫ່ງ, ຫ້ອງການກົງສຸນ 1 ແຫ່ງ, ກົງສຸນກິຕິມະສັກ 19 ແຫ່ງ. ຂະນະດຽວກັນ, ສະຖານທູດຕ່າງປະເທດ ທີ່ມີສຳນັກງານຢູ່ລາວ 28 ແຫ່ງ, ກົງສຸນໃຫຍ່ 6 ແຫ່ງ, 18 ອົງການສາກົນທີ່ຂຶ້ນກັບລັດຖະບານ ແລະ ມີກົງສຸນກິດຕິມະສັກ 18 ປະເທດ ປະຈຳຢູ່ລາວ, ມີດ່ານສາກົນ 28 ແຫ່ງ, ໄດ້ສ້າງຕັ້ງສະມາຄົມມິດຕະພາບກັບ 18 ປະເທດ, ໄດ້ເຊັນສັນຍາຍົກເວັ້ນວີຊາກັບ 37 ປະເທດ, ສຳລັບຜູ້ຖືໜັງສືຜ່ານແດນການທູດ ແລະ ລັດຖະການ, ຍົກເວັ້ນວີຊາສອງຝ່າຍ ສຳລັບຜູ້ຖືໜັງສືຜ່ານແດນທຳມະດາກັບ 11 ປະເທດ. ໃນນັ້ນ, ມີ 9 ປະເທດສະມາຊິກອາຊຽນ, ຣັດເຊຍ ແລະ ມົງໂກລີ. ຍົກເວັ້ນວີຊາຝ່າຍດຽວ ສຳລັບຜູ້ຖືໜັງສືຜ່ານແດນທຳມະດາກັບ 8 ປະເທດຄື: ສ.ເກົາຫລີ, ຍີ່ປຸ່ນ, ສະຫະພັນສະວິດ, ລຸກຊຳບວກ, ດານມາກ, ຊູແອັດ, ແຟງລັງ ແລະ ນອກແວ. ມີການພົວພັນດ້ານເສດຖະກິດ ຫລາຍກວ່າ 50 ປະເທດ.

ຄະນະພັກ, ຄະນະໂຄສະນາອົບຮົມທຸກຂັ້ນ ຕ້ອງເພີ່ມຄວາມເອົາໃຈໃສ່ຕໍ່ວຽກງານການເມືອງ-ແນວຄິດ ໃຫ້ມີຄຸນນະພາບສູງຂຶ້ນ ດ້ວຍການປັບປຸງເນື້ອໃນ ແລະ ວິທີການໃຫ້ເໝາະສົມ, ແທດເຖິງຕົວຈິງ, ຕ້ອງເອົາວຽກງານໂຄສະນາສຶກສາອົບຮົມຕິດພັນກັບວຽກງານພັດທະນາເສດຖະກິດ-ສັງຄົມ ແລະ ຕິດພັນກັບຂະບວນການຮັກຊາດ, ພັດທະນາ ແລະ ວຽກງານ 3 ສ້າງ ໃຫ້ປາກົດຜົນເປັນຈິງ. ຖືເອົາການສະເຫລີມສະຫລອງວັນຊາດ 2 ທັນວາ ຄົບຮອບ 47 ປີ, ເປັນການໂຄສະນາປຸກລະດົມນ້ຳໃຈຮັກຊາດ ຮັກລະບອບໃໝ່, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຊີດຊູບົດບາດການນຳພາຂອງພັກ, ສຸມທຸກກຳລັງ ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ; ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຄັ້ງທີ IX ໃຫ້ປາກົດຜົນເປັນຈິງ ໄປພ້ອມກັບການປຸກລະດົມ ໃນທົ່ວສັງຄົມໃນການສືບຕໍ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

ພ້ອມນັ້ນ, ກໍຕັ້ງໜ້າປຸກລະດົມຂະບວນການເຄື່ອນໄຫວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃຫ້ປາກົດຜົນເປັນຈິງ ເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ເຮັດໃຫ້ປະເທດຊາດຫລຸດພົ້ນອອກຈາກຄວາມດ້ອຍພັດທະນາ. ສິ່ງສຳຄັນຕ້ອງຮັບປະກັນໃຫ້ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ. ເພີ່ມທະວີຄວາມສັກສິດແຫ່ງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ຕາມທິດພັກນຳພາ, ລັດຄຸ້ມຄອງດ້ວຍກົດໝາຍ ແລະ ປະຊາຊົນເປັນເຈົ້າເຂົ້າຮ່ວມ ເຮັດໃຫ້ສັງຄົມມີຄວາມສະຫງົບ, ສາມັກຄີປອງດອງ ແລະ ມີການພັດທະນາດ້ວຍຄວາມໜັກແໜ້ນຕໍ່ເນື່ອງ; ເພີ່ມທະວີຄວາມສາມັກຄີປອງດອງຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກ, ເອົາໃຈໃສ່ຈຳກັດແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ສ້າງບັນຍາກາດສົດໃສ, ສະຫງ່າຜ່າເຜີຍ, ມີຄວາມຍິ້ມແຍ້ມແຈ່ມໃສ ເຮັດໃຫ້ປະເທດຊາດມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ. ເອົາໃຈໃສ່ປະຕິບັດແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃກ້ຄຽງ ກໍຄືບັນດາປະເທດໃນປະຊາຄົມອາຊຽນ, ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດໃນໂລກ.



**ຮອງປະທານ...**

ໃນໂອກາດນີ້, ສະຫາຍຮອງປະທານສະພາແຫ່ງຊາດລາວ ໄດ້ກ່າວສະແດງຄວາມຍໍ່ານັບຮັບຕ້ອນອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມຂອງສະຫາຍ ໂງ ວັນ ຕວັນ ແລະ ຄະນະ ໃນຄັ້ງນີ້ ທີ່ດຳເນີນໄປໃນບັນຍາກາດທີ່ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຍັງມີຫລາຍກິດຈະກຳຮ່ວມກັນເພື່ອສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2022 ຢ່າງເປັນຂະບວນຟົດຟື້ນ ແລະ ມີຄວາມໝາຍສຳຄັນອັນເລິກເຊິ່ງ, ທັງເປັນການນຳເອົາໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງສະໜິດສະໜົມ ຖານສະຫາຍອ້າຍນ້ອງມາສູ່ປະຊາຊົນລາວ ແລະ ເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ; ໄດ້ຕີລາຄາສູງຕໍ່ຜົນການພົບປະປຶກສາຫາລືຂອງ 2 ອົງການກວດສອບແຫ່ງລັດ ແລະ ພິເສດໃນໄລຍະມາຢ້ຽມຢາມຂອງຄະນະໃນຄັ້ງນີ້ 2 ຝ່າຍ ຍັງໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມື ລະຫວ່າງ ສອງອົງການກວດສອບແຫ່ງລັດ ສປປລາວ ແລະ ສສ.ຫວຽດນາມ ໃນໄລຍະຕໍ່ໜ້າ ແລະ ຝ່າຍຫວຽດນາມ ຍັງໄດ້ມອບຮັບໂຄງການປັບປຸງການບໍລິຫານຫ້ອງການອົງການກວດສອບແຫ່ງລັດ ຫັນສູ່ທັນສະໄໝ (E-Office) ໃຫ້ແກ່ອົງການກວດສອບແຫ່ງລັດ ສປປລາວ ເຊິ່ງຈະເປັນການຊ່ວຍໃຫ້ການບໍລິຫານວຽກຂອງອົງການກວດສອບແຫ່ງລັດມີຄວາມສະດວກທັນສະໄໝຂຶ້ນຕື່ມ.

ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ແຈ້ງສະພາບການອັນພົ້ນເດັ່ນຂອງ ສປປລາວ ໃຫ້ແກ່ຄະນະຊາບ, ແຈ້ງຫຍໍ້ການເຄື່ອນໄຫວຂອງສະພາແຫ່ງຊາດ ໃນໄລຍະຜ່ານມາ ແລະ ການກະກຽມກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

ສະຫາຍ ໂງ ວັນ ຕວັນ ໄດ້ສະແດງຄວາມປິຕິຊົມຊື່ນທີ່ໄດ້ມີໂອກາດມາຢ້ຽມຢາມ ສປປລາວ ເປັນປະເທດທຳອິດ ພາຍຫລັງທີ່ຖືກແຕ່ງຕັ້ງຈາກສະພາແຫ່ງຊາດ ໃຫ້ເປັນປະທານອົງການກວດສອບແຫ່ງລັດຫວຽດນາມ ເຊິ່ງເປັນການສະແດງໃຫ້ເຫັນເຖິງລັກສະນະພິເສດຂອງການພົວພັນລະຫວ່າງ ຫວຽດນາມ ແລະ ລາວ; ໄດ້ແຈ້ງໃຫ້ຊາບການເຄື່ອນໄຫວຢ້ຽມຢາມ ສປປລາວ, ຜົນການພົບປະ 2 ຝ່າຍ, ໄດ້ຮ່ວມກັບຝ່າຍລາວປຶກສາຫາລືກ່ຽວກັບທິດທາງໃນການຮ່ວມມືໃນຕໍ່ໜ້າ ລະຫວ່າງ ອົງການກວດສອບແຫ່ງລັດ ຂອງ 2 ປະເທດ.

ໃນຕອນທ້າຍ, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຂອບໃຈ ມາຍັງພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອຢ່າງໃຫຍ່ຫລວງ, ລ້ຳຄ່າ, ທັນການ ແລະ ມີປະສິດທິຜົນແກ່ພັກ, ລັດ ແລະ ປະຊາຊົນລາວ ບັນດາເຜົ່າຕະຫລອດມາ; ອວຍພອນໃຫ້ສະຫາຍ ໂງ ວັນ ຕວັນ ພ້ອມຄະນະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ອວຍພອນ ໃຫ້ການເຄື່ອນໄຫວຢ້ຽມຢາມໃນຄັ້ງນີ້ ຈົ່ງປະສົບຜົນສຳເລັດ ແລະ ກັບຄືນປະເທດດ້ວຍຄວາມສະຫວັດດີພາບ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)









# ຮອງເຈົ້າແຂວງ ລາຍງານຄວາມຄືບໜ້າແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ

ຮຽບຮຽງໂດຍ: ສົນຍາ



ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງເຊກອງ ເມື່ອເດືອນສິງຫາຜ່ານມາ, ທ່ານ ຂັນຕີ ສີລະວົງສາ ຮອງເຈົ້າແຂວງແຂວງເຊກອງ, ຜູ້ຊີ້ນຳເສດຖະກິດຂັ້ນແຂວງ ໄດ້ຂຶ້ນລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ສະພາປະຊາຊົນແຂວງເຊກອງ ຊຸດທີ IIວ່າ: ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຢູ່ແຂວງເຊກອງ ໃນໄລຍະຜ່ານມາ ດຳເນີນໄປທ່າມກາງສະພາບການຂອງໂລກ ແລະ ພາກພື້ນຜັນແປໄປຢ່າງສັບສົນ, ການລະບາດຂອງພະຍາດໂຄວິດ-19, ສະພາບໄພເງິນເຟີ້, ການຂາດແຄນນ້ຳມັນເຊື້ອໄຟ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າພາຍໃນແຂວງ ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ, ອົງການປົກຄອງແຂວງ ແລະ ຄວາມພະຍາຍາມຂອງຂະແໜງການ ທີ່ໄດ້ຈັດຕັ້ງປະຕິບັດມາດຕະການ ແລະ ວຽກຈຸດສຸມຕິດພັນກັບແຜນພັດທະນາຂອງຂະແໜງການ ຈຶ່ງເຮັດໃຫ້ມີຜົນສຳເລັດຄື:

1) ຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ ແລະ ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ເປັນຕົ້ນແມ່ນການປູກພືດທາດແປ້ງ, ປູກກາເຟ, ພືດຜັກ, ໂສມ, ການລ້ຽງສັດເປັນຟາມ ເຊິ່ງເຮັດໃຫ້ສາມາດຜະລິດຊີ້ນ, ປາ, ໄຂ່ ແລະ ໝູ ໃຫ້ສັງຄົມບໍລິໂພກ ເພື່ອຫລຸດຜ່ອນການນຳເຂົ້າ ໂດຍໃນ 6 ເດືອນຕົ້ນປີ 2022 ເກັບກູ້ຜະລິດເຂົ້ານາແຊງໄດ້ 3.334 ໂຕນ; ມັນຕົ້ນ 2 ແສນກວ່າໂຕນ; ຢາງພາລາ 3.051 ໂຕນ; ກາເຟ 31.318 ໂຕນ; ພືດສະບຽງອາຫານ 5.818 ໂຕນ; ພືດເປັນສິນຄ້າ 11.200 ໂຕນ ແລະ ທົ່ວແຂວງມີສັດລ້ຽງທັງໝົດ 9 ແສນກວ່າໂຕ.

2) ໄດ້ເອົາໃຈໃສ່ຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ; ແກ້ໄຂການເກັບລາຍຮັບຈາກການນຳເຂົ້ານ້ຳມັນເຊື້ອໄຟຜ່ານມາແຂວງເຊກອງ; ປະຕິບັດກົນໄກ, ລະບຽບການ ເພື່ອແກ້ໄຂການຮົ່ວໄຫລຂອງລາຍຮັບຈາກການນຳເຂົ້າສິນຄ້າ ໂດຍການນຳໃຊ້ລະບົບທັນສະໄໝໃນການແຈ້ງພາສີແບບເອເລັກໂຕຣນິກ; ຄຸ້ມຄອງການຈັດຊື້ໃໝ່, ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕ້ອງຮັບປະກັນໃຫ້ຖືກຕ້ອງຕາມການອອກແບບ, ມາດຕະການດ້ານເຕັກນິກ, ກຳນົດໝາຍເຕັກນິກ, ແຜນງົບປະມານ ແລະ ລາຄາທີ່ຜ່ານການຈັດຊື້-ຈັດຈ້າງ ແລະ ມີການປະມູນຕາມລະບຽບກົດໝາຍ; ປະສານສົມທົບກ່ຽວກັບການອອກໃບຕາດິນ ແລະ ການໂອນກຳມະສິດອອກໃບຕາດິນລະຫວ່າງພະແນກຊັບພະຍາກອນທຳມະຊາດ ກັບພະແນກການເງິນເຊິ່ງຖານຂໍ້ມູນຈຳນວນໜຶ່ງທີ່ຕ້ອງສືບຕໍ່ປະຕິບັດ ໂດຍສະເພາະແມ່ນຄ່າເຊົ່າ-ສຳປະທານທີ່ສູນກາງເປັນຜູ້ອະນຸຍາດ.

3) ປັບປຸງກົງຈັກພະນັກງານທີ່ເຮັດວຽກຢູ່ໃນປ່ອງບໍລິການ-ການລົງທຶນປະຕູດຽວ, ປັບປຸງຂັ້ນຕອນ ແລະ ອາຍຸການຄົ້ນຄວ້າຜ່ານເອກະສານຂໍສະເໜີຂໍການລົງທຶນໃຫ້ກະທັດຮັດ, ວ່ອງໄວກວ່າເກົ່າ ແລະ ແຈ້ງຕອບນັກລົງທຶນໃນເວລາທີ່ສັ້ນທີ່ສຸດ; ຄົ້ນຄວ້າສ້າງນິຕິກຳໃຕ້ກົດໝາຍ, ສ້າງນະໂຍບາຍດຶງດູດການລົງທຶນ ໂດຍປັບປຸງບາງມາດຕາທີ່ເຫັນວ່າ ບໍ່ສອດຄ່ອງກັບແຂວງເຊກອງ.

4) ການຄຸ້ມຄອງເງິນຕາຕ່າງປະເທດ ຄະນະນຳຂອງແຂວງໄດ້ຄົ້ນຄວ້າປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການແກ້ໄຂອັດຕາແລກປ່ຽນ ໂດຍໄດ້ມີທິດແກ້ໄຂບັນຫາສະເພາະໜ້າ ດ້ວຍການພິຈາລະນາຫົວໜ່ວຍທຸລະກິດທີ່ມີເງື່ອນໄຂສາມາດແລກປ່ຽນເງິນຕາຕ່າງປະເທດ ຕາມອັດຕາແລກປ່ຽນຂອງທະນາຄານ ແລະ ໄດ້ມອບໃຫ້ພະແນກການເງິນກຽມຄວາມພ້ອມໃນການຈັດຕັ້ງປະຕິບັດ.

# ຜ່ານມະຕິການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນ



(ສພຊ) ຕອນບ່າຍຂອງວັນອັງຄານ, ວັນທີ 22 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານໃນຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ທ່ານ ທອງຄານ ວັດສະດາກອນ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ເລກທີ 1252/ສພຂ, ລົງວັນທີ 22 ພະຈິກ 2022 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II, ປະກອບມີຢູ່ 6 ມາດຕາ ໄດ້ກຳນົດການແຕ່ງຕັ້ງຄະນະຊີ້ນຳ, ອະນຸກຳມະການຊ່ວຍວຽກ, ສິດ ແລະ ໜ້າທີ່ຂອງແຕ່ລະອະນຸກຳມະການ ແລະ ວຽກງານອື່ນໆຢ່າງລະອຽດ. ຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນ ແລະ ມີຄຳສະເໜີແລກປ່ຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ກ່ຽວກັບການກະກຽມເນື້ອໃນ, ການປະສານງານກັບພະແນກການ ແລະ ອົງການກ່ຽວຂ້ອງໃນໄລຍະຜ່ານມາ ເຫັນວ່າມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແດ່ ແລະ ບັນຫາທີ່ຍັງຄົງຄ້າງຄວນຈະມີວິທີທາງແກ້ໄຂ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອເປັນການປະຕິບັດຕາມທິດຊີ້ນຳຂອງຄະນະປະທານສະພາປະຊາຊົນແຂວງ ແລະ ປະຕິບັດຕາມແຜນດາດຄະເນຂອງສະພາປະຊາຊົນແຂວງ ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ຖືກຕ້ອງ, ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ທວງທັນຕາມກຳນົດເວລາ.

(ແສງພອນ ອິນນະລົງ)

# ປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022




(ສພຊ) ເພື່ອເປັນການຜັນຂະຫຍາຍເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ແລະ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບກັນ; ໃນວັນທີ 22 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປະຈຳປີ 2022 ຂອງໜ່ວຍພັກຮາກຖານສະພາປະຊາຊົນແຂວງ ໂດຍການປະທານຂອງສະຫາຍ ແສງເດືອນ ຈັນທະລັງສີ ເລຂາໜ່ວຍພັກຮາກຖານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ ແລະ ເຂົ້າຮ່ວມຂອງສະຫາຍ ພອນສີ ພົນລະວົງ ຮອງປະທານກວດກາພັກແຂວງ, ຫົວໜ້າຄະນະຮັບຜິດຊອບການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂັ້ນແຂວງ; ມີບັນດທ່ານຄະນະໜ່ວຍພັກ, ຄະນະປະຈຳ, ຄະນະຮັບຜິດຊອບການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂັ້ນແຂວງ ແລະ ບັນດາສະຫາຍສະມາຊິກພັກສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນທີ່ປະຊຸມໄດ້ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳແລະໜ່ວຍງານປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ. ຫລັງຈາກນັ້ນ, ກໍໄດ້ຮັບຟັງການລາຍງານຮ່າງບົດສະຫລຸບລາຍງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ເຊິ່ງໃນໄລຍະຜ່ານມາໜ່ວຍພັກຮາກຖານສະພາປະຊາຊົນແຂວງໄດ້ເອົາໃຈໃສ່ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໂດຍຕິດພັນກັບການຈັດຕັ້ງປະຕິບັດວຽກງານວິຊາສະເພາະ, ຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ ແລະ ຕິດພັນກັບ 5 ດ້ານໃນຄຳສັ່ງຂອງກົມການເມືອງສູນກາງພັກ, ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ເຊື່ອໝັ້ນຕໍ່ການນຳພາຂອງພັກມີຄວາມສາມັກຄີພາຍໃນ, ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ເອົາໃຈໃສ່ຊີ້ນຳ-ນຳພາການປະຕິບັດໜ້າທີ່ວຽກງານວິຊາສະເພາະ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດພາລະບົດບາດ ດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, ດ້ານການຕິດຕາມກວດກາ ໄປຄຽງຄູ່ກັບການສ້າງຄວາມເຂັ້ມແຂງໃຫ້ພະນັກງານ-ລັດຖະກອນ ໂດຍຕິດພັນກັບການພົວພັນກັບຂະແໜງການອື່ນ ແລະ ໃນທິດທາງຕໍ່ໜ້າໜ່ວຍພັກຮາກຖານສະພາປະຊາຊົນແຂວງໄດ້ວາງທິດທາງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຄືການສ້າງໜ່ວຍພັກໃຫ້ມີຄວາມເຂັ້ມແຂງ, ມີຄວາມສາມັກຄີເປັນເອກະພາບກັນ, ສືບຕໍ່ສ້າງສະມາຊິກພັກປອດໃສ, ເຂັ້ມແຂງໃຫ້ໄດ້ 90% ຂຶ້ນໄປ, ສູ້ຊົນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມ 5 ເນື້ອໃນທີ່ກົມການ ເມືອງສູນກາງພັກກຳນົດໄວ້ ໃຫ້ສຳເລັດຕາມລະດັບຄາດໝາຍຂອງໜ່ວຍພັກວາງອອກໃຫ້ໄດ້ 90 % ຂຶ້ນໄປ. ນອກນັ້ນ, ໃນທີ່ປະຊຸມຍັງໄດ້ພ້ອມກັນປະກອບຄຳຄິດ, ຄຳເຫັນແລກປ່ຽນເຊິ່ງກັນແລະກັນໃສ່ບົດສະຫລຸບດັ່ງກ່າວ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນຂຶ້ນຕື່ມອີກ ແລະ ສາມາດນຳໄປຈັດຕັ້ງຜັນຂະຫຍາຍເປັນແຜນວຽກອັນລະອຽດ.

(ນາງ ສຸກສະຫວັນ ອິນທະແສງ)

# ປຶກສາຫາລືກ່ຽວກັບການປະສານງານ ແລະ ງົບປະມານຂອງ ສພຂ



(ສພຊ) ຕອນບ່າຍຂອງວັນສຸກທີ 18 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການປະສານງານ ແລະ ງົບປະມານຂອງສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງ; ມີທ່ານ ນາງ ອຳໄພວອນ ປັນຍາລັກ ຫົວໜ້າຫ້ອງວ່າການແຂວງອຸດົມໄຊ, ມີຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ພະແນກການເງິນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ແມ່ນເພື່ອປຶກສາຫາລືກ່ຽວກັບການປະສານງານ ແລະ ງົບປະມານເພື່ອຄວາມເປັນເອກະພາບ ລະຫວ່າງສະພາປະຊາຊົນແຂວງ ກັບຫ້ອງວ່າການແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ພະແນກການເງິນແຂວງ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານຂອງສະພາປະຊາຊົນແຂວງໂດຍຫຍໍ້, ຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II; ຈາກນັ້ນ, ບັນທ່ານຜູ້ທີ່ເຂົ້າຮ່ວມກອງປະຊຸມ ໄດ້ມີຄຳເຫັນ ແລະ ປຶກສາຫາລືກັນຢ່າງກົງໄປກົງມາ ກ່ຽວກັບການປະສານງານລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ, ລະຫວ່າງເລຂາທິການ ກັບຫ້ອງວ່າການແຂວງ ແລະ 3 ຄະນະກຳມະການກັບພະແນກການກ່ຽວຂ້ອງ ເພື່ອເຮັດໃຫ້ການກະກຽມບັນດາເນື້ອໃນ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະກົດໝາຍ ແລະ ລະບຽບການ.

(ແສງພອນ ອິນນະລົງ)

# ບາງຄຳເຫັນຂອງ ສສຊ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກຳລັງຈະດຳເນີນຂຶ້ນໃນມໍ່ໆນີ້ ຜູ້ຂຽນຈຶ່ງໄດ້ຍົກເອົາບາງຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໄດ້ກ່າວມີຄຳເຫັນກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ທີ່ໄດ້ລາຍງານໃນວາລະກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 13 ມິຖຸນາຜ່ານມາ ເປັນຕົ້ນແມ່ນທ່ານ ແດງ ປະທຸມທອງ ສສຊ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ເຊິ່ງທ່ານໄດ້ມີຄຳເຫັນວ່າ:

ຈາກການຮັບຟັງການລາຍງານໂດຍສັງເຂບຂອງ ທ່ານນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານແຫ່ງ ສປປລາວ, ຜ່ານການລົງພົບປະປະຊາຊົນ ແລະ ຕິດຕາມກວດກາຕົວຈິງຕາມພາລະບົດບາດຂອງ ສສຊ ປະຈຳເຂດເລືອກຕັ້ງທີ 18 ໃນໄລຍະຜ່ານມາ ໃນນາມຕາງໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 18 ຂໍມີບາງຄຳຄິດເຫັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ໂດຍຍໍ້ດັ່ງນີ້:

ໂດຍລວມແລ້ວຂ້າພະເຈົ້າຂໍສະແດງຄວາມເປັນເອກະພາບຕໍ່ກັບການລາຍງານ ແລະ ການປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ມີຄຳເຫັນໄປແລ້ວນັ້ນ ໂດຍສະເພາະແມ່ນ 6 ເດືອນທີ່ຜ່ານມາ ປະເທດພວກເຮົາຍັງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມຍັງມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍເສດຖະກິດ ຍັງສືບຕໍ່ຂະຫຍາຍຕົວໃນຈັງຫວະທີ່ດີ ແລະ ສາມາດປະຊັບປະຄອງໄດ້ແຕ່ແນວໃດກໍຕາມ ກໍຍັງມີຂໍ້ຄົງຄ້າງທີ່ທຸກຄົນທຸກພາກສ່ວນຕ້ອງໄດ້ສະແດງອອກເຖິງຄວາມຮັກຊາດ, ເສຍສະຫລະ, ຄວາມສາມັກຄີ ເພື່ອບຸກທະລຸແກ້ໄຂຢ່າງແຂງແຮງກວ່າເກົ່າ ໂດຍສະເພາະແມ່ນບັນຫາຄວາມເປັນເຈົ້າການ, ຄວາມຮັບຜິດຊອບບັນຫາກົນໄກວິທີການທີ່ແທດເໝາະກັບສະພາບ ແລະ ເງື່ອນໄຂທີ່ເກີດຂຶ້ນໃນໄລຍະປັດຈຸບັນ.

ທ່ານ ແດງ ປະທຸມທອງ ໄດ້ກ່າວວ່າ: ຢາກມີຄຳເຫັນກ່ຽວກັບເປົ້າໝາຍທີ 3 ວ່າດ້ວຍການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ບັນຫານີ້ຖືວ່າເປັນບັນຫາທີ່ສຳຄັນຫລາຍ ເພາະວ່າພັກພວກເຮົາໄດ້ເວົ້າວ່າ ບໍ່ມີຜົນປະໂຫຍດອື່ນໃດ ອອກຜົນປະໂຫຍດຂອງປະຊາຊົນ ຕໍ່ກັບການແກ້ໄຂຄວາມທຸກຍາກການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໄລຍະຜ່ານມາເຫັນວ່າພັກ-ລັດຖະບານ ກໍໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ໂດຍສະເພາະແມ່ນການແກ້ໄຂຄວາມທຸກຍາກ ເຮັດໃຫ້ຄວາມທຸກຍາກຢູ່ໃນທົ່ວປະເທດຄ່ອຍຫລຸດລົງເທື່ອລະກ້າວ ເຊິ່ງຜ່ານຈາກການເຄື່ອນໄຫວຕົວຈິງນັ້ນ ຍັງເຫັນວ່າການແກ້ໄຂຄວາມທຸກຍາກຍັງມີຄວາມຊັກຊ້າ ໂດຍສະເພາະແມ່ນການສ້າງອາຊີບໃໝ່ທີ່ໝັ້ນຄົງ, ການຊຸກຍູ້ໃຫ້ເກີດມີການຜະລິດໃຫ້ກາຍເປັນສິນຄ້າ ເພື່ອໃຫ້ປະຊາຊົນທີ່ລາຍຮັບທີ່ໝັ້ນຄົງຍັງເຮັດໄດ້ໜ້ອຍ ໂດຍສະເພາະຍັງບໍ່ທັນມີແຜນການເປັນນິຕິກຳຕົວຈິງໂດຍກົງ ເພື່ອໄປແກ້ໃຫ້ປະຊາຊົນ.

ບັນຫາສຳຄັນອີກບັນຫາໜຶ່ງທີ່ສະພາແຫ່ງຊາດ ໄດ້ຮັບຮອງໃນປີ 2022 ນັ້ນກໍຄືການຮັບຮອງເອົາການສ້າງເມືອງໃຫ້ຫລຸດພົ້ນຈາກຄວາມທຸກຍາກໃນ 4 ຕົວເມືອງໃນທົ່ວປະເທດ ໃນຢູ່ເຂດເລືອກຕັ້ງທີ 18 ມີ 1 ເມືອງ ຄືເມືອງທ່າໂທມ ແຕ່ຜ່ານການລົງຕິດຕາມກວດກາເຫັນວ່າ ຫລາຍດ້ານໃນເງື່ອນໄຂມາດຖານຕ່າງໆແມ່ນພວກເຮົາສາມາດແກ້ໄຂໄດ້ ແຕ່ຍັງເງື່ອນໄຂໜຶ່ງ, ມາດຖານໜຶ່ງທີ່ເປັນມາດຖານທີ່ສຳຄັນສົມຄວນແມ່ນມາດຖານນຳໃຊ້ນໍ້າສະອາດ ໃນນີ້ຢູ່ເມືອງທ່າໂທມ ໄດ້ມີໂຄງການລົງທຶນຂອງລັດເຮັດນໍ້າປະປາ ໄດ້ຮັບອະນຸມັດແຕ່ປີ 2014 ດ້ວຍມູນຄ່າ 38,54 ຕື້ກວ່າກີບ ຈາກການຈັດຕັ້ງປະຕິບັດຕົວຈິງມາຮອດປັດຈຸບັນ ໄດ້ພຽງແຕ່ 32% ມູນຄ່າທັງໝົດແມ່ນ 12 ຕື້ກວ່າກີບ ແຕ່ວ່າການຈ່າຍຕົວຈິງ ຈ່າຍໄດ້ແຕ່ 1,29 ຕື້ກວ່າກີບ ມາຮອດປັດຈຸບັນໂຄງການນີ້ຍັງຢຸດສະງັດ ບໍ່ທັນໄດ້ປະຕິບັດ ໄປກວດກາຕົວຈິງ ເຫັນວ່າມີຄວາມລຳບາກຫລາຍປ່າດົງປົກຄຸ້ມຕົບໜາພໍສົມຄວນ ຂ້າພະເຈົ້າເຫັນວ່າຄວນຈະໄດ້ເບິ່ງເພາະວ່າຢູ່ໃນການຮັບຮອງຂອງສະພາແຫ່ງຊາດ ເປັນໂຄງການທີ່ຈະຕ້ອງໄດ້ແກ້ໄຂ ເພື່ອໃຫ້ການປະຕິບັດມະຕິຂອງສະພາແຫ່ງຊາດ ໃຫ້ໄດ້ໃນປີ 2022 ຄືໃຫ້ເມືອງຫລຸດພົ້ນອອກຈາກເມືອງທຸກຍາກ 4 ຕົວເມືອງຢູ່ໃນທົ່ວປະເທດ.

ເປົ້າໝາຍທີ 4 ແມ່ນການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມບູນຫລຸດຜ່ອນຄວາມສ່ຽງໄພ ຈາກໄພພິບັດຕ່າງໆ ບັນຫານີ້ໃນເປົ້າໝາຍທີ 4 ຂ້າພະເຈົ້າເຫັນວ່າເປັນເປົ້າໝາຍທີ່ພົວພັນກັບການແກ້ໄຂປາກົດການຫຍໍ້ທໍ້ພົວພັນກັບວາລະແຫ່ງຊາດ ໂດຍສະເພາະແມ່ນການອອກໃບຕາດິນ ເຊິ່ງຕາມການລາຍງານຜ່ານມາ ເຫັນວ່າໄດ້ພຽງແຕ່ 10% ເຫັນວ່າໄດ້ໜ້ອຍຫລາຍ ເພາະວ່າການອອກໃບຕາດິນຖ້າອອກໄດ້ຫລາຍກໍສາມາດແກ້ໄຂໄດ້ປາກົດການຫຍໍ້ທໍ້ກ່ຽວກັບການຈັບຈອງດິນສະຊາຍ ໂດຍສະເພາະໃນເຂດເລືອກຕັ້ງທີ 18 ບັນຫາການຈັບຈ່ອງດິນສະຊາຍເປັນບັນຫາທີ່ສຳຄັນ ແລະ ເປັນບັນຫາທີ່ຟົດເດືອດຫລາຍ, ປ່າສະຫງວນພູເຂົາຄວາຍກໍຖືກຈັບຈ່ອງສະຊາຍ ນີ້ແມ່ນບັນຫາທີ່ຈະຕ້ອງໄດ້ແກ້ໄຂການອອກໃບຕາດິນ ເພື່ອແກ້ໄຂປາກົດການຫຍໍ້ທໍ້ດັ່ງກ່າວ.

ຖ້າອອກໃບຕາດິນໄດ້ຫລາຍແລ້ວ ພວກເຮົາສາມາດຕອບສະໜອງກັບວາລະແຫ່ງຊາດ ໂດຍສະເພາະແມ່ນຈະເຮັດໃຫ້ພວກເຮົາມີລາຍຮັບຫລາຍຂຶ້ນ ເພາະວ່າເປັນຖານລາຍຮັບທີ່ຍືນຍົງ ແລະ ໝັ້ນຄົງກ່ຽວກັບການອະນຸຍາດອອກໃບຕາດິນ ວິທີແກ້ໄຂໃນຮູບແບບນີ້ຜ່ານມາກໍໄດ້ມີການອອກໃບຕາດິນໃຫ້ ແຕ່ວ່າມີພຽງພາກສ່ວນດຽວເປັນຜູ້ເຮັດ ຂ້າພະເຈົ້າເຫັນວ່າໃນໄລຍະທີ່ປະຕິບັດວາລະແຫ່ງຊາດນີ້ ຄວນໄດ້ຈັດຕັ້ງເປັນຂະບວນການ ເພື່ອອອກໃບຕາດິນວິທີດຽວກັບເຮັດສຳມະໂນຄົວ ໂດຍລົງໄປແຕ່ລະບ້ານເປັນກຸ່ມ ເພື່ອໃຫ້ແລ້ວໄວໃຫ້ສຳເລັດໃນປີ 2023 ເພື່ອໃຫ້ເງິນໄຫລເຂົ້າງົບປະມານຂອງພວກເຮົາ; ແກ້ໄດ້ບັນຫາການຈັບຈອງເຮັດໃຫ້ຄົນທີ່ລະເມີດການຈັບຈ່ອງດິນຜິດກົດໝາຍ ກໍຖືກແກ້ໄຂນັ້ນ ເຫັນວ່າຄວນໄດ້ຈັດຕັ້ງປະຕິບັດ.

# 30 ປີແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງເມືອງເງິນ

ຮຽບຮຽງໂດຍ: ອິນແປງ ແຫວນຄຳ



ເມືອງເງິນ ແຂວງໄຊຍະບູລີ ໄດ້ຈັດພິທີສະເຫລີມສະຫລອງວັນສ້າງຕັ້ງເມືອງເງິນ ຄົບຮອບ30 ປີ (ວັນທີ 14 ພະຈິກ 1992-14 ພະຈິກ 2022) ເຂົ້າຮ່ວມມີທ່ານ ທະວີສັກ ໄຊຍະວົງ ວ່າການເຈົ້າເມືອງ ເມືອງເງິນ, ມີບັນດາອະດີດການນຳຂອງເມືອງ, ພະນັກງານອາວຸໂສບຳນານ, ຄະນະປະຈຳພັກເມືອງ, ຄະນະພັກເມືອງ, ຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ, ກຳລັງປະກອບອາວຸດ, ນັກຮຽນ-ນັກສຶກສາ, ນັກທຸລະກິດ-ພໍ່ຄ້າຊາວຂາຍ, ການຈັດຕັ້ງທຸກພາກສ່ວນ ຕະຫຼອດຮອດມວນຊົນຊາວເມືອງເງິນເຂົ້າຮ່ວມ.

ເນື່ອງໃນໂອກາດທີ່ມີຄວາມໝາຍຄວາມສຳຄັນດັ່ງກ່າວ ຄະນະນຳ ພ້ອມດ້ວຍພະນັກງານຫລັກແຫລ່ງຂອງເມືອງເງິນ ໄດ້ເຂົ້າຮ່ວມວາງພວງມາລາ ຢູ່ອະນຸສາວະລີ ນັກຮົບນິລະນາມ ແລະ ວາງກະຕ່າດອກໄມ້ ຢູ່ອານຸສອນສະຖານປະທານ ໄກສອນ ພົມວິຫານ. ຈາກນັ້ນ, ກໍໄດ້ເຄື່ອນຂະບວນກ້ອນກຳລັງ ຈາກບັນດາບ້ານ, ພະນັກງານ, ກຳລັງປະກອບອາວຸດ ແລະ ກ້ອນກຳລັງຈາກຊາວໜຸ່ມ-ເຍົາວະຊົນ ເຂົ້າສູ່ພິທີຢ່າງເປັນທາງການ.

ທ່ານ ທະວີສັກ ໄຊຍະວົງ ໄດ່ກ່າວປາໄສ ກ່ຽວກັບການປົກປັກຮັກສາ ແລະ ສ້າງສາພັດທະນາ ເມືອງເງິນຕະຫລອດໄລຍະ 30 ປີຜ່ານມາ ເຊິ່ງບາງຕອນທ່ານໄດ້ກ່າວວ່າ: ໃນປີ 1992 ກົມການເມືອງສູນກາງພັກ ໄດ້ຕົກລົງສ້າງຕັ້ງເຂດພິເສດຊຽງຮ່ອນ-ຫົງສາ ໃນເດືອນເມສາ 1992 ແຕ່ງຕັ້ງຄະນະຮັບຜິດຊອບເຂດຊຽງຮ່ອນ-ຫົງສາ ເຊິ່ງຖືເອົາເມືອງຫົງສາ ເປັນຈຸດໃຈກາງ ໃນນັ້ນ, ເມືອງເງິນກໍໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 14 ພະຈິກ 1992 ນັບແຕ່ມື້ນັ້ນມາຈຶ່ງມີຊື່ເມືອງເງິນ ໃນແຜນທີ່ປະເທດລາວ ແລະ ເປັນທີ່ພາກພູມໃຈຂອງປະຊາຊົນຊາວເມືອງເງິນຫາອັນປຽບບໍ່ໄດ້.

ເມືອງເງິນ ປະກອບມີ 22 ບ້ານ ຕະຫລອດໄລຍະເວລາແຫ່ງການຊີ້ນຳ-ນຳພາ ແລະ ຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ຂັ້ນຕ່າງໆມາເປັນເວລາ 30 ປີໄດ້ເຮັດໃຫ້ເມືອງເງິນມີຄວາມເຕີບໃຫຍ່ ແລະ ພັດທະນາກ້າວຂຶ້ນຕາມລຳດັບ ເຊິ່ງສະແດງອອກດັ່ງນີ້:

ຜ່ານມາ ຄະນະພັກ, ອົງການປົກຄອງເມືອງ ໄດ້ເອົາໃຈໃສ່ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຂັ້ນຮາກຖານທ້ອງຖິ່ນ ຂອງຕົນຢ່າງຕັ້ງໜ້າເຂັ້ມແຂງ ຖືເອົາວຽກນີ້ເປັນວຽກຕົ້ນຕໍ ທົ່ວເມືອງມີບ້ານປ້ອງກັນຊາດເຂັ້ມແຂງ 22 ບ້ານ, ບ້ານປ້ອມໝັ້ນສູ້ຮົບເອກະລາດ 22 ບ້ານ ແລະ ບ້ານປ້ອງກັນຄວາມສະຫງົບ 22 ບ້ານ ເທົ່າກັບ 100%, ຕິດພັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄດ້ເຮັດໃຫ້ເສດຖະກິດ ຂອງເມືອງສືບຕໍ່ຂະຫຍາຍຕົວສະເລ່ຍ 5,3% ລວມຍອດລາຍຮັບ 483,89 ຕື້ກີບ, ສະເລ່ຍໃສ່ຫົວຄົນໄດ້ 2.464 ໂດລາສາຫະລັດຕໍ່ຄົນຕໍ່ປີ, ການສ້າງຖານລາຍຮັບງົບປະມານການເງິນໃນແຕ່ລະປີໄດ້ມີທ່າກ້າວຂະຫຍາຍຕົວໄປຕາມຈັງຫວະ ອັນທີພົ້ນເດັ່ນ ເມືອງເງິນ ແມ່ນຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ ເພື່ອລວມສູນລາຍຮັບເຂົ້າງົບປະມານຢູ່ຈຸດດຽວ, ມີກອງທຶນພັດທະນາຂັ້ນບ້ານ 20 ບ້ານ, ມີເງິນຝາກທັງໝົດ 18,22 ຕື້ກີບ. ທົ່ວເມືອງມີຄອບຄົວທີ່ບໍ່ບັນລຸຕາມມາດຖານດຳລັດ 348/ລບ ທັງໝົດ 534 ຄອບຄົວ ເທົ່າກັບ 14,12%, ມີບ້ານພັດທະນາ 21 ບ້ານ ເທົ່າກັບ 95,45%. ອັນພົ້ນເດັ່ນເມືອງພວກເຮົາໄດ້ມີສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ ຫລື ODOP ແລະໄດ້ນຳໃຊ້ກາໝາຍດັ່ງກ່າວຢ່າງເປັນທາງການ, ປັດຈຸບັນທົ່ວເມືອງມີເສັ້ນທາງຍາວທັງໝົດ 205,5 ກມ, ໄດ້ຊົມໃຊ້ສັນຍານໂທລະສັບລະບົບ 2G, 3G ແລະ 4G ກວມເອົາ 100%, ໄດ້ຊົມໃຊ້ໄຟຟ້າໃນລະບົບທັງໝົດ 22 ບ້ານ ເທົ່າກັບ 100%, ມີຄອບຄົວທີ່ນຳໃຊ້ໄຟຟ້າ 3.707 ຄອບຄົວ ເທົ່າກັບ 98,01%. ນອກຈາກນີ້, ພາຍໃນເທສະບານເມືອງຍັງໄດ້ຊົມໃຊ້ໄຟຟ້າສາທາລະນະດ້ວຍລະບົບແສງຕາເວັນ, ບ້ານເທດສະບານເມືອງໄດ້ນຳໃຊ້ນໍ້າປະປາ ແລະ ບ້ານເຂດພູດອຍແມ່ນໃຊ້ນໍ້າບາດານ ແລະນໍ້າລິນຄົບທຸກບ້ານ. ທົ່ວເມືອງມີໂຮງຮຽນລ້ຽງເດັກ-ອະນຸບານ, ປະຖົມ ແລະ ມັດທະຍົມທັງໝົດ 46 ແຫ່ງ, ມີນັກຮຽນ 4.888 ນ້ອງ; ອັດຕາເຂົ້າຮຽນຂອງເດັກເກນອາຍຸ 3-5 ປີ ກວມເອົາ 83,7%, ອັດຕາເຂົ້າຮຽນຂອງເດັກໃນເກນອາຍຸ 6-10 ປີກວມ 98,3%, ອັດຕາເຂົ້າຮຽນມັດທະຍົມຕົ້ນ 85%, ອັດຕາເຂົ້າຮຽນຊັ້ນມັດທະຍົມປາຍ 48,9%, ໄດ້ປະກາດເປັນເມືອງຈົບມັດທະຍົມຕົ້ນບຳລຸງໃນວັນທີ 15 ມີນາ 2015, ການບໍລິການທາງດ້ານສາທາລະນະສຸກໄດ້ເຂົ້າເຖິງປະຊາຊົນຢ່າງຊັດເຈນທົ່ວເມືອງມີໂຮງໝໍຊຸມຊົນ 1 ແຫ່ງ, ໂຮງໝໍນ້ອຍ 5 ແຫ່ງ ທຽບໃສ່ປີ 1992 ເພີ້ມຂຶ້ນ 5 ແຫ່ງ, ອັດຕາການຊົມໃຊ້ນໍ້າສະອາດກວມ 96,22%; ມີຄອບຄົວສາທາລະນະສຸກແບບຢ່າງ 3.703 ຄອບຄົວ ເທົ່າກັບ 97,19%, ເປັນບ້ານສາທາລະນະສຸກແບບຢ່າງແລ້ວຈຳນວນ 22 ບ້ານ ເທົ່າກັບ 100%.ມີບ້ານພັດທະນາສີມືແຮງງານ 18 ບ້ານ ເທົ່າກັບ 81,82%, ມີກອງທຶນແຮສຸກເສີນ 100 ລ້ານກີບ; ມີບ້ານວັດທະນະທຳ 22 ບ້ານ, ກວມເອົາ 100%, ມີກົມກອງວັດທະນະທຳ 37 ກົມກອງ, ກວມເອົາ 74%, ມີບ້ານສາມັກຄີປອງດອງ 21 ບ້ານ, ໄດ້ຮັບຮອງເປັນເມືອງສາມັກຄີປອງດອງຂຶ້ນໃນວັນທີ 11 ມັງກອນ 2019.

ຕອນທ້າຍພິທີ, ໄດ້ມີການລັ່ນຄ້ອງ ແລະ ປ່ອຍນົກເພື່ອເປັນສິຣິມຸງຄຸນ ໃຫ້ແກ່ບ້ານເມືອງ ແລະ ຊົມການສະແດງສິລະປະວັນນະຄະດີ ຂອງນັກຮຽນ, ຊົມການແຂ່ງຂັນບັ້ງໄຟດອກອີກດ້ວຍ.

# ກອງປະຊຸມປຶກສາຫາລືວຽກງານພົ້ນເດັ່ນ ຂອງຄະນະປະຈຳສະພາປະຊາຊົນແຂວງ




(ສພຊ) ຕອນບ່າຍຂອງວັນຈັນທີ 28 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານພົ້ນເດັ່ນຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານປະຈຳເດືອນພະຈິກ 2022 ແລະ ວາງທິດທາງແຜນການປະຈຳເດືອນທັນວາ 2022 ຂອງຄະນະປະຈຳສະພາປະຊາຊົນແຂວງ. ຫລັງຈາກນັ້ນ, ບັນດາທ່ານໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫລຸບດັ່ງກ່າວ, ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລືບັນຫາທີ່ພົ້ນເດັ່ນເປັນຕົ້ນແມ່ນເອກະພາບແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II, ປຶກສາຫາລືຄົ້ນຄວ້າພະນັກງານນຳພາຄຸ້ມຄອງ ໄປເຝິກອົບຮົມຫັດແອບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຸດທີ 1 ປະຈຳປີ 2022, ປຶກສາຫາລືຄົ້ນຄວ້າບຸກຄະລາກອນສືບທອດປ່ຽນແທນຮອງເລຂາທິການ ທີ່ເຂົ້າຮັບບຳນານ ແລະ ປຶກສາຫາລືວຽກງານພົ້ນເດັ່ນອີກຈຳນວນໜຶ່ງ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອປະຕິບັດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາປະຊາຊົນແຂວງ ຕາມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ປະຕິບັດຕາມແຜນຂອງສະພາປະຊາຊົນແຂວງ, ເພື່ອເຮັດໃຫ້ການກະກຽມເນື້ອໃນ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ມີຜົນສຳເລັດຕາມລະດັບຄາດໝາຍ.

(ແສງພອນ ອິນນະລົງ)



## 108 ສາລະ

# ວັນສໍາຄັນຂອງຊາດ

ໂດຍ: ຜູ້ອື່ນ

ທ່າມກາງບັນຍາກາດ ທີ່ທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ ພວມອອກແຮງແຂ່ງຂັນກັນສ້າງຜົນງານ ຕ້ອນຮັບວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍຄືວັນຊາດ 2 ທັນວາ ຄົບຮອບ 47 ປີ ແລະ ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ໃນປີ 2022 ນີ້; ຄໍລໍາ 108 ສາລະໄດ້ນໍາເອົາມູນເຊື້ອ ແລະ ຄວາມໝາຍຄວາມສໍາຄັນຂອງວັນຊາດ 2 ທັນວາ ມາທົບທວນຫວນຄືນ ເພື່ອພ້ອມກັນເຊີດຊູນໍ້າໃຈຮັກຊາດ, ເອກະລາດ ເປັນເຈົ້າຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສ້າງປະເທດຊາດໃຫ້ໝັ້ນຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງຍຸຕິທໍາ ແລະ ສີວິໄລ.

ຄືດັ່ງພວກເຮົາໄດ້ຮັບຮູ້ນໍາກັນແລ້ວວ່າ, ຊາດລາວແມ່ນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານຫລາຍພັນປີ, ມີມູນເຊື້ອສະຫງ່າອົງອາດ, ຕໍ່ສູ້ຕ້ານການຮຸກຮານຂອງສັດຕູພາຍນອກ ແລະ ສ້າງສາພັດທະນາ. ໂດຍສືບທອດມູນເຊື້ອອັນອົງອາດຂອງບັນພະບຸລຸດ, ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນໍາພາຂອງພັກປະຊາຊົນປະຕິວັດລາວ ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານ ຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍ ປະເທດຊາດຢ່າງມີໄຊ, ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975 ລັດປະຊາທິປະໄຕ ປະຊາຊົນແມ່ນລັດທີ່ເກີດຈາກການຕໍ່ສູ້ເສຍສະຫລະອັນໃຫຍ່ຫລວງຂອງປະຊາຊົນລາວບັນດາເຜົ່າ, ແມ່ນລັດທີ່ມາຈາກປະຊາຊົນ, ແມ່ນລັດແຫ່ງອໍານາດຂອງປະຊາຊົນ, ເພື່ອຜົນປະໂຫຍດຂອງປະຊາຊົນ.



ວັນທີ 2 ທັນວາ ປີ 1975 ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ທີ່ຍືດເຍື້ອຍາວນານ ເປັນພັນປີຂອງຊາດລາວເຮົາແມ່ນວັນທີ່ປະຊາຊົນລາວບັນດາເຜົ່າ ໄດ້ມີສິດເສລີພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆໃນເວທີສາກົນ ກໍຄືປະຊາຄົມໂລກ. ວັນທີ 2 ທັນວາ ແມ່ນວັນແຫ່ງສັນຕິພາບ, ແຫ່ງການກ້າວສູ່ຍຸກສະໄໝ ແຫ່ງການສ້າງປະເທດລາວໃຫ້ມີສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

ປະທານ ໄກສອນ ພົມວິຫານ ໄດ້ຕີລາຄາວັນທີ 2 ທັນວາ 1975 ເອົາໄວ້ວ່າ: "ບໍ່ທັນມີເວລາໃດ ທີ່ປະຊາຊົນເຮົາ ເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດນັ້ນ ໄດ້ຍາດເອົາໄຊຊະນະສົມບູນ, ເຖິງຖອງ ແລະ ບໍລິບູນໄດ້ຢ່າງສະຫງ່າລາສີຄືແນວນີ້ຈັກເທື່ອ ໄຊຊະນະນັ້ນ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດເຮົາຫາກຍັງເປັນຄັ້ງທໍາອິດ ທີ່ປະຊາຊົນລາວບັນດາເຜົ່າ ຜູ້ເຄີຍດໍາລົງຊີວິດເປັນທາດໃນເມື່ອກ່ອນ ໄດ້ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງ ທີ່ມີເອກະລາດ, ສິດເສລີພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ສັງຄົມນິຍົມ, ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າຂອງປວງຊົນລາວ ກໍຄືຂອງມວນມະນຸດປະກົດເປັນຈິງ ຢູ່ບົນພື້ນແຜ່ນດິນອັນແສນຮັກຂອງພວກເຮົາ".

ການກະກຽມໃຫ້ແກ່ການສະເຫລີມສະຫລອງວັນຊາດ 2 ທັນວາ, ຄົບຮອບ 47 ປີນີ້ ເຊິ່ງເປັນໄລຍະເວລາທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ ພວມຊຸ້ນຂ້ຽວສຸມໃສ່ຜັນຂະຫຍາຍຜົນສໍາເລັດກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ໃນປີນີ້ກໍເປັນປີທີສອງ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ເປັນປີ ທີ່ພວກເຮົາຍັງມີຄວາມທ້າທາຍບໍ່ໜ້ອຍກວ່າປີຜ່ານມາ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະການແຜ່ລາມຂອງພະຍາດໂຄວິດ 19 ໃນໄລຍະຜ່ານມາ ແຕ່ເຖິງຢ່າງໃດກໍຕາມ, ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວ ກໍໄດ້ສຸມທຸກເຫື່ອແຮງ ຄວາມເອົາໃຈໃສ່ຜ່ານຜ່າທຸກສະພາບ ຄວາມຫຍຸ້ງຍາກ-ສິ່ງທ້າທາຍ ແລະ ມີຜົນສໍາເລັດພົ້ນເດັ່ນໃນຫລາຍດ້ານ.

## ສາລາກະວີ

# ວັນຊາດ 2 ທັນວາ

# ໂດຍ: ສະຄັນຍຸ ເພັດສະລາດ

❊ ວາໂຍພັດຕ່ອຍຕ້ອງ
ແກວ່ງໄກວທັງໂອນເອນ
ເໝືອນບອກເຕືອນເຮົາຮູ້
2 ທັນວາເອກອ້າງ ເມໂຄຈາງແຈ່ມຟ້າ
ໃບຕອງຫວັ່ນວິໄຫວ
ອ່ວາຍລະດູໄຫລຍູ້
ລະດູການຂອງຊາດ
ອານາແຈ້ງຮຸ່ງເຮືອງ ແທ້ແລ້ວ!

❊ ເປັນການເຕືອນກ່າວແຈ້ງ
ປວງປະຊາຊື່ນຊົມ
ຮັກບໍ່ເຫີຍຫາຍແຄ້ວ
ສັດຈະຈິງບໍ່ແອບອ້າງ
ວັນໃຫຍ່ສໍາຄັນ
ມ່ວນໃນມະໂນແມ້ງ
ຄຸນຄວາມດີດອມມິ່ງ
ຫົນທາງສ້າງສ່ອງລາວ ນີ້ນາ!

❊ ປວງປະຊາຮັບຕ້ອນ
ວົງເດືອນປີວສະບັດ
ລາວທັງຜອງຕອມເຕົ້າ
ວັນຄືນກາຍຜ່ານພົ້ນ
ສະອອນຮື່ມຄັນທຸງ
ສະຫງ່າງາມເງົາແຈ້ງ
ສະໜຸກໃນໃຈຊື່ນ
ປະກາດກ້ອງຍຸກສະໄໝ ນັ້ນນາ!

❊ 2 ທັນວາ ເອກອ້າງ
ມີພັກ-ລັດນໍາພາ
ສີວິໄລແຂງເຂັ້ມ
ທົ່ວອານາເຂດຄ້າຍ
ປະຊາຊື່ນສາມັກຄີ
ປະຊາຊົນເປັນເຈົ້າ
ພັດທະນາເຮືອງຮຸ່ງ
ສະບາຍແທ້ລື່ນປະມານ

❊ ເພິ່ນວ່າຫອມດອກໄມ້
ເອ້ອວດຕາດູງາມ
2 ທັນວາ ຖະໜອມໝັ້ນ
ຈິດໃຈລາວກ່ອມກ້ຽວ ນ້ອມໜ່ຽວອະພິວາດກົ້ມ
ມາໄລຊື່ນຊົມສະເໜ
ຍິ້ມຍໍຊູລິນ້ອມ
ພັນປີສະຫລັກຂີດ
ວັນທາໄຫວ້ລະນຶກນາມ ແທ້ແລ້ວ!



## ສຸກສະບາຍຫາຍໂຣຄ

# ອາການໝົດໄຟໃນການເຮັດວຽກ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ

ການທີ່ຕື່ນແຕ່ເຊົ້າອອກໄປເຮັດວຽກທຸກມື້ ແລະ ຕ້ອງພົບກັບບັນຫາຕ່າງໆ ທັງບັນຫາການຈະລາຈອນທີ່ແອອັດ, ວຽກງານທີ່ໜັກໜາ, ບັນຫາຕ່າງໆໃນການເຮັດວຽກ ແລະ ຍັງຕ້ອງຮັບມືກັບເພື່ອນຮ່ວມງານທີ່ມີຫລາຍປະເພດ ເຊິ່ງປັດໄຈເຫລົ່ານີ້ ອາດຈະນໍາໄປສູ່ອາການ "ໝົດໄຟໃນການເຮັດວຽກ" ໄດ້ ແລະ ໃນສະບັບນີ້, ເຮົາມາສຶກສານໍາກັນເບິ່ງວ່າ ຕົນເອງມີອາການໝົດໄຟໃນການເຮັດວຽກ ຫລື ບໍ່?.

-ຖ້າອາການໝົດໄຟນີ້ ຫາກເກີດຂຶ້ນກັບບຸກຄົນໃດ ກໍຈະເຮັດໃຫ້ຄວາມສຸກໃນການເຮັດວຽກຂອງບຸກຄົນນັ້ນຫລຸດໜ້ອຍຖອຍລົງ ເກີດຄວາມຜິດພາດໃນການປະຕິບັດເຮັດໜ້າທີ່ວຽກງານ ແລະ ຜົນສຸດທ້າຍຄືສິ່ງຜົນເສຍຕໍ່ອົງກອນ ກໍຄືເຮັດໃຫ້ໂອກາດການລາອອກເພີ່ມຫລາຍຂຶ້ນ ແລະ ຄວາມສໍາເລັດຂອງອົງການນັ້ນກໍຫລຸດລົງເຊັ່ນດຽວກັນ; ອາການໝົດໄຟໃນການເຮັດວຽກ ເກີດຂຶ້ນຈາກຄວາມເມື່ອຍລ້າ, ຕຶງຄຽດຈາກການເຮັດວຽກ ເຊິ່ງອາດຈະພາໃຫ້ເກີດອາການຕ່າງໆເຫລົ່ານີ້:

- ເມື່ອຍລ້າ (Emotional exhaustion) ມີຄວາມຮູ້ສຶກວ່າຕ້ອງແບກຮັບຄວາມກົດດັນທາງອາລົມຫລາຍເກີນໄປ ແລະ ຮູ້ສຶກໝົດພະລັງງານໃນການເຮັດວຽກ;

- ຄວາມເປັນສ່ວນຕົວ (Depersonalization) ມີທັດສະນະຄະຕິດ້ານລົບຕໍ່ກັບວຽກງານ ບໍ່ໃສ່ໃຈ, ລະເລີຍ ຫລື ບໍ່ເອົາໃຈໃສ່ ແລະ ແຍກຕົວອອກຈາກໝູ່;

- ບໍ່ກະຕືລືລົ້ນຕໍ່ຄວາມສໍາເລັດຂອງຕົນ (Diminished sense of personal accompli-shment) ຮູ້ສຶກວ່າຕົນເອງບໍ່ມີຄວາມສາມາດ, ບໍ່ມີປະສິດທິພາບໃນການເຮັດວຽກ ແລະ ບໍ່ສາມາດທີ່ຈະຊ່ວຍເຫລືອຜູ້ອື່ນໄດ້.

ອາການໝົດໄຟໃນການເຮັດວຽກ ສາມາດເກີດຂຶ້ນໄດ້ກັບທຸກຄົນ ແຕ່ເມື່ອຮູ້ສຶກວ່າເກີດຂຶ້ນກັບໂຕເອງແລ້ວ ໃຫ້ຕັ້ງສະຕິກຽມພ້ອມທັງຮ່າງກາຍ ແລະ ຈິດໃຈ ໃນແຕ່ລະມື້ຂອງການເຮັດວຽກ, ທົບທວນໂຕເອງວ່າຕົນເອງໝົດໄຟໃນການເຮັດວຽກ ຫລື ບໍ່ ? ຖ້າມີ ຄວນຫາເວລາພັກຜ່ອນ ໃຫ້ຄຸນຄ່າໃນໂຕເອງ, ເຮັດວຽກເປັນທີມ ແບ່ງປັນຄວາມຄິດ ໂດຍຝຶກການໃຊ້ເຕັກໂນໂລຊີ ທີ່ທັນສະໄໝເຂົ້າຊ່ວຍໃນການເຮັດວຽກ ເພື່ອຄວາມສະດວກ ແລະ ວ່ອງໄວ ແລະ ຈະເປັນການທີ່ດີທີ່ສຸດ ຖ້າເຮົາມີຄົນທີ່ໄວ້ໃຈຄອຍໃຫ້ຄໍາປຶກສາ ແລະ ເປັນທີ່ເພິ່ງພາທາງຈິດໃຈ ເຊິ່ງບໍ່ໄດ້ໝາຍຄວາມວ່າ ຕ້ອງເປັນຄົນຮັກເທົ່ານັ້ນ ຫາກແຕ່ເປັນຄົນໃນຄອບຄົວ, ໝູ່ເພື່ອນ ກໍຄືເພື່ອນຮ່ວມງານ.

www.thairath.co.th



# ກົດໝາຍວ່າດ້ວຍການສຳຫລວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

### ພາກທີ VIII
### ການຄຸ້ມຄອງ ແລະ ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່
### ໝວດທີ 1
### ການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 80 ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພາຍໃນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ກະຊວງພາຍໃນ;
2. ພະແນກພາຍໃນ ແຂວງ, ນະຄອນຫຼວງ;
3. ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ.

ນອກນັ້ນ, ຍັງມີຄະນະກຳມະການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຊຶ່ງແມ່ນການຈັດຕັ້ງບໍ່ປະຈຳການທີ່ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງພາຍໃນ ແລະ ມີກອງເລຂາຕັ້ງຢູ່ກະຊວງພາຍໃນ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ຊຸກຍູ້, ຕິດຕາມ, ກວດກາ ແລະປະເມີນຜົນການຈັດຕັ້ງປະຕິບັດວຽກງານກ່ຽວກັບຂໍ້ມູນຂ່າວສານ ພູມສາດແຫ່ງຊາດ. ສຳລັບໂຄງປະກອບບຸກຄະລາກອນ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການຂໍ້ມູນຂ່າວສານພູມສາດແຫ່ງຊາດແລະກອງເລຂາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 81 ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
4. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະສ້າງແຜນທີ່

ອ່ານຕໍ່ສະບັບໜ້າ...

ຖະແຫລ່ງ...

ປະຈຳປີຂອງສະພາແຫ່ງຊາດ ໂດຍຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2020) ໃນການກະກຽມ ແລະ ຮຽກໂຮມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 263/ຄປຈ ລົງວັນທີ 28/10/2022 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX.

ຂ້າພະເຈົ້າ, ໃນນາມເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂາກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ຂໍຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດ ແຈ້ງມາຍັງບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

**1. ວຽກງານຂອງລັດຖະບານ**

1) ບົດລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນປະຈຳປີ 2022 ແລະ ທິດທາງແຜນການ ໃນປີ 2023 ຂອງລັດຖະບານ;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 09 ເດືອນ, ຄາດຄະເນ 03 ເດືອນທ້າຍປີ ແລະ ໝົດປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023;

4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

5) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

6) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

7) ບົດລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ.

**2. ວຽກງານອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ**

1) ບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021;

2) ບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບປີ2020.

**3. ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ**

1) ບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງສານປະຊາຊົນສູງສຸດ;

2) ບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນສູງສຸດ.

**4. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ ໃນນີ້:**

2.1 ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື:

(1) ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ;

(2) ຮ່າງກົດໝາຍວ່າດ້ວຍການທາງນ້ຳ;

(3) ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ.

2.2 ກົດໝາຍປັບປຸງ 9 ສະບັບ ຄື:

(1) ກົດໝາຍວ່າດ້ວຍ ທະນາຍຄວາມ;

(2) ກົດໝາຍວ່າດ້ວຍ ທະບຽນສານ;

(3) ກົດໝາຍວ່າດ້ວຍ ການກັນ ແລະ ຄວບຄຸມພະຍາດຕິດຕໍ່;

(4) ກົດໝາຍວ່າດ້ວຍ ວິສາຫະກິດ;

(5) ກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ;

(6) ກົດໝາຍວ່າດ້ວຍ ອົງການໄອຍະການທະຫານ;

(7) ກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ;

(8) ກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ;

(9) ກົດໝາຍວ່າດ້ວຍ ການກວດກາລັດ.

**5. ວຽກງານສະພາແຫ່ງຊາດ**

1) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງສະພາແຫ່ງຊາດ; ຜົນການຕິດຕາມກວດກາຂອງສະພາແຫ່ງຊາດກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດຕາມມະຕິສະບັບເລກທີ 62/ສພຊ, ລົງວັນທີ 8 ກໍລະກົດ 2022.

2) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025;

**6. ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ**

1) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນເງິນຕາ ປະຈຳປີ 2022 ແລະ ແຜນການປະຈຳປີ 2023; ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 09 ເດືອນ, ຄາດຄະເນ 03 ເດືອນທ້າຍປີ ແລະ ໝົດປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023;

2) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

3) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

4) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2020;

5) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023;

6) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຕິດຕາມກວດກາການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ;

7) ບົດປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ.

**7. ມະຕິກອງປະຊຸມສະພາແຫ່ງຊາດ ລວມມີ 20 ສະບັບ:**

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023, ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021 ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 09 ເດືອນ, ຄາດຄະເນ 03 ເດືອນທ້າຍປີ ແລະ ໝົດປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021;

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ຜົນການກວດກາຕາມຜົນການກວດສອບປີ 2020;

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025;

9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 12 ສະບັບ.

ອີກເທື່ອໜຶ່ງ, ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າ ຂໍເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະ ກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດແລະພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້, ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ: ບັນດາທ່ານສາມາດສົ່ງຄຳຄິດຄຳເຫັນ ແລະ ຄຳສະເໜີໄປຍັງກອງປະຊຸມໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.
- ອີເມວ: nalao.156@gmail.com




AIPA 43
CAMBODIA 2022
THE 43RD GENERAL ASSEMBLY OF
THE ASEAN INTER-PARLIAMENTARY ASSEMBLY
Meeting of the Women Parliamentarians of AIPA (WAIPA)






Bilateral Meeting
Between the High Delegation of the National Assembly
of the Kingdom of Cambodia
And
The High Delegation of the National Assembly
of the Lao People's Democratic Republic
Phnom Penh, 25th November 2022


Signing Ceremony
ពិធីចុះហត្ថលេខា




LAO P.D.R




ពិធីចុះហត្ថលេខា






LAO P.D.R


LAO P.D.R




AIPA 43
CAMBODIA 2022
THE 43RD GENERAL ASSEMBLY OF